**ມິຊຊາອາທິດທີ 3 ກຳນົດປາສກາ ປີ A**

**ວັນທີ 26 ເມສາ 2020**



**ພຣະວໍລະສານໂດຍນັກບຸນລູກາ 24, 13-35**

ໃນມື້ຕົ້ນອາທິດ, ມີລູກສິດສອງຄົນເດີນທາງໄປບ້ານໜຶ່ງຊື່ແອມມາອູສ ໄກຈາກນະຄອນເຢຣູຊາແລມປະມານສິບຫລັກ ທັງສອງສົນທະນາກັນເຖິງເຫດການທີ່ໄດ້ເປັນມາ. ເວລາກຳລັງສົນທະນາກັນໄປນັ້ນ, ພຣະເຢຊູເຈົ້າເອງໄປທັນແລະເດີນທາງຮ່ວມໄປກັບພວກເຂົາ. ແຕ່ວ່າຕາຂອງພວກເຂົາທັງສອງບໍ່ສາມາດຈື່ຈຳພຣະອົງໄດ້. ພຣະເຢຊູເຈົ້າຖາມພວກເຂົາວ່າ: "ພວກເຈົ້າເດີນທາງສົນທະນາກັນເຖິງເລື່ອງຫຍັງ? ເບິ່ງຄືວ່າໂສກເສົ້າແທ້." ຜູ້ໜຶ່ງຊື່ເກລໂອຟາສຕອບວ່າ: "ໝົດນະຄອນເຢຣູຊາແລມມີແຕ່ທ່ານຜູ້ດຽວທີ່ບໍ່ຮູ້ເລື່ອງຫາກໍເປັນມາໃນສອງສາມມື້ນີ້." ພຣະອົງຈຶ່ງຖາມວ່າ: "ແມ່ນເລື່ອງຫຍັງ?" ເຂົາຕອບພຣະອົງວ່າ: "ເລື່ອງຂອງເຢຊູຊາວນາຊາແຣດ, ຜູ້ເປັນປະພາສົກ, ມີລິດເດດຫລາຍທາງດ້ານກິດຈະການແລະດ້ານຄວາມເວົ້າຕໍ່ພຣະພັກພຣະເປັນເຈົ້າແລະຕໍ່ໜ້າປະຊາຊົນທົ່ວໄປ. ພວກຫົວໜ້າສົງແລະເຈົ້ານາຍຂອງພວກເຮົາໄດ້ມອບພຣະອົງໃຫ້ເຂົາຕັດສິນລົງໂທດປະຫານຊີວິດແລ້ວຄຶງພຣະອົງໃສ່ກາງເຂນ. ສ່ວນພວກເຮົາເອງ, ພວກເຮົາຫວັງວ່າ: ທ່ານຜູ້ນີ້ແລຈະປົດປ່ອຍຊາດອິສຣາແອລ; ແຕ່ຄືວ່ານັ້ນແລ້ວເຫດການນັ້ນໄດ້ຜ່ານໄປສາມວັນແລ້ວ. ຈິງຢູ່, ມີຜູ້ຍິງບາງຄົນໃນພັກພວກຂອງໄທເຮົາໄດ້ທຳໃຫ້ພວກເຮົາວຸ້ນວາຍໃຈຫລາຍຄື ພວກນາງໄດ້ໄປທີ່ຄູຫາແຕ່ເຊົ້າໆ, ແລະບໍ່ເຫັນພຣະສົບຂອງພຣະອົງ. ພວກນາງຈຶ່ງຫລົບມາບອກພວກເຮົາວ່າມີເທວະດາປະຈັກມາແລະບອກວ່າພຣະອົງມີຊີວິດຢູ່. ພວກເຮົາບາງຄົນກໍໄດ້ໄປທີ່ຄູຫາ ແລະໄດ້ພົບເຫັນສິ່ງຕ່າງໆຄືກັນກັບທີ່ພວກຜູ້ຍິງໄດ້ເວົ້າ; ແຕ່ສ່ວນພຣະອົງນັ້ນພວກເຂົາບໍ່ໄດ້ເຫັນ."

ພຣະອົງຈຶ່ງກ່າວກັບພວກເຂົາວ່າ: "ໂອ! ຄົນອັບປັນຍາ ແລະໃຈໂງ່ຊ້າ ເພື່ອຈະເຊື່ອສິ່ງທີ່ພວກປະພາສົກໄດ້ປະກາດໄວ້ ! ບໍ່ຮູ້ບໍວ່າ ພຣະຄຣິສໂຕຈະຕ້ອງທົນທຸກທໍລະມານນີ້ກ່ອນ ເພື່ອຈະເຂົ້າສູ່ສີມຸງຄຸນຂອງພຣະອົງ?" ແລ້ວພຣະອົງກໍອະທິບາຍພຣະຄຳພີທຸກຂໍ້ທີ່ກ່ຽວເຖິງພຣະອົງຕາມທີ່ບັນດາປະພາສົກໄດ້ກ່າວໄວ້, ເລີ່ມຕົ້ນແຕ່ໂມແຊລົງມາ.

ເມື່ອເດີນໄປໃກ້ຈະຮອດບ້ານບ່ອນພວກເຂົາໄປນັ້ນແລ້ວ, ພຣະອົງກໍທຳທ່າຈະເດີນທາງຕໍ່ໄປ. ແຕ່ທັງສອງໜ່ວງໜ່ຽວພຣະອົງໄວ້ເວົ້າວ່າ: "ເຊີນທ່ານພັກເຊົາຢູ່ກັບພວກເຮົາ, ຍ້ອນໃກ້ຈະຄ່ຳ, ຕາເວັນຈະຕົກແລ້ວ." ພຣະອົງຈຶ່ງເຂົ້າໄປພັກກັບພວກເຂົາ. ເມື່ອພຣະອົງປະທັບນັ່ງໂຕະກັບພວກເຂົາ, ພຣະອົງຊົງຈັບເອົາຂະໜົມປັງ, ຊົງກ່າວສົມມະນາຄຸນ, ແລ້ວບິອອກຍື່ນໃຫ້ພວກເຂົາກິນ. ເວລານັ້ນຕາຂອງພວກເຂົາກໍເປີດອອກແລະຈື່ພຣະອົງໄດ້. ແຕ່ວ່າພຣະອົງຊົງຫາຍຕົວໄປຈາກສາຍຕາຂອງພວກເຂົາແລ້ວ. ທັງສອງຈຶ່ງເວົ້າກັນວ່າ: "ຫົວໃຈພວກເຮົາ ບໍ່ຮູ້ສຶກຕື່ນຮ້ອນບໍ, ເວລາພຣະອົງກ່າວກັບພວກເຮົາຕາມທາງແລະເວລາພຣະອົງອະທິບາຍພຣະຄຳພີໃຫ້ພວກເຮົາຟັງ?" ທັງສອງລຸກຂຶ້ນກັບເມືອນະຄອນເຢຣູຊາແລມທັນທີແລະໄດ້ພົບພວກອັກຄະສາວົກທັງສິບເອັດກຳລັງຊຸມນຸມກັນຢູ່ກັບສາວົກອື່ນໆອີກ. ພວກນີ້ກໍໄດ້ບອກພວກເຂົາທັງສອງວ່າ: " ພຣະອົງເຈົ້າໄດ້ກັບເປັນຄືນມາຈິງແທ້ແລ້ວ, ແລະພຣະອົງໄດ້ປະຈັກແກ່ຊີມອນແລ້ວ". ສ່ວນສາວົກສອງຄົນນັ້ນກໍໄດ້ເລົ່າເຫດການທີ່ໄດ້ເປັນມາຕາມທາງແລະເລື່ອງພວກເຂົາຈື່ພຣະອົງໄດ້ໃນເວລາພຣະອົງຊົງບິຂະໜົມປັງ.

ນີ້ແມ່ນວາຈາຂອາພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 24, 13-35**

ຫລັງຈາກທີ່ພຣະເຢຊູເຈົ້າໄດ້ກັບເປັນຄືນມາຈາກຄວາມຕາຍ, ພຣະອົງໄດ້ປະຈັກມາຫາຜູ້ທຳອິດຄືນາງມາຣີອາມາກດາເລນາ. ຍ້ອນນາງໄດ້ໄປທີ່ຄູຫາແຕ່ເຊົ້າໆຂອງວັນຕົ້ນອາທິດ. ສິ່ງທີ່ທຳໃຫ້ນາງມາຣີອາມາກດາເລນາຈື່ຈຳພຣະເຢຊູເຈົ້າໄດ້ຄືສຽງປາກຂອງພຣະອົງ. ພຣະເຢຊູເຈົ້າໄດ້ເອີ້ນຊື່ຂອງນາງແລະນາງໄດ້ຕອບພຣະອົງວ່າ: "ຣາບບູນີ" ແປວ່າ: "ພຣະອາຈານ". ແລ້ວນັ້ນ. ພຣະເຢຊູເຈົ້າກໍສົ່ງນາງໄປຫາພວກລູກສິດຄົນອື່ນເພື່ອນຳຂ່າວດີແຫ່ງການກັບເປັນຄືນມາຂອງພຣະອົງໄປໃຫ້ພວກເຂົາຮູ້.

ຈາກນັ້ນ, ພຣະເຢຊູເຈົ້າກໍໄດ້ປະຈັກມາຫາພວກລູກສິດຂອງພຣະອົງທີ່ກຳລັງຢູ່ໃນຄວາມຢ້ານກົວ ຍ້ອນຢ້ານພວກຢິວ. ສິ່ງທີ່ທຳໃຫ້ພວກລູກສິດຈື່ຈຳພຣະເຢຊູເຈົ້າໄດ້ນັ້ນຄື "ສັນຕິສຸກ" ທີ່ມາຈາກພຣະອົງ. ສັນຕິສຸກທີ່ທຳໃຫ້ພວກລູກສິດອອກຈາກຄວາມຢ້ານກົວເພື່ອໄປສູ່ຄວາມກ້າຫານ, ຄວາມຫວັງແລະຄວາມຍິນດີ ເພາະພວກເຂົາໄດ້ເຫັນພຣະເຢຊູເຈົ້າ.

ແລ້ວນັ້ນ, ພຣະເຢຊູເຈົ້າກໍໄດ້ປະຈັກມາຫາໂທມາຜູ້ມີຊື່ວ່າ: "ດີດີມ", ໜຶ່ງໃນພວກລູກສິດຂອງພຣະອົງ. ໂທມາໄດ້ຈື່ຈຳພຣະເຢຊູເຈົ້າໄດ້ຍ້ອນເຂົາໄດ້ເຫັນຮອຍແຜທີ່ພຣະຫັດແລະພຣະສີຂ້າງຂອງພຣະອົງ. ແລະຍິ່ງໄປກວ່ານັ້ນ ,ເຂົາໄດ້ເອົານິ້ວມືສຳພັດຮອຍແຜທີ່ພຣະສີຂ້າງຂອງພຣະອົງ ແລະເຂົາໄດ້ເຊື່ອ.

ວັນນີ້, ພຣະເຢຊູເຈົ້າກໍສືບຕໍ່ປະຈັກມາໃຫ້ພວກລູກສິດສອງຄົນທີ່ຈາກນະຄອນເຢລູຊາແລມເພື່ອກັບເມືອບ້ານເກົ່າເມືອງເດີມຂອງຕົນອັນມີຊື່ວ່າບ້ານແອມມາອູສ. ລູກສິດສອງຄົນນີ້ກໍຢູ່ໃນສະພາບເໝືອນກັບລູກສິດຄົນອື່ນກ່ອນທີ່ໄດ້ພົບພຣະເຢຊູເຈົ້າ ຄືພວກເຂົາຢູ່ໃນຄວາມໂສກເສົ້າແລະສິ້ນຫວັງ. ລະຫວ່າງທາງ, ພຣະເຢຊູເຈົ້າກໍໄດ້ປະຈັກມາຮ່ວມເດີນທາງນຳພວກເຂົາ, ແຕ່ພວກເຂົາບໍ່ຮູ້ຈັກພຣະອົງ. ພຣະເຢຊູເຈົ້າໄດ້ຄ່ອຍເປີດໄຂສະຕິປັນຍາຂອງລູກສິດທັງສອງນີ້ ດ້ວຍການອະທິບາຍພຣະຄຳພີທີ່ໄດ້ບັນທຶກກ່ຽວກັບຕົວຂອງພຣະອົງ. ເມື່ອເວລາພວກເຂົາໄດ້ຟັງວາຈາຂອງພຣະອົງ, ດວງໃຈພວກເຂົາກໍມີຄວາມຮ້ອນຮົນແລະດວງຕາແຫ່ງສະຕິປັນຍາຂອງພວກເຂົາກໍຄ່ອຍເປີດອອກ. ຈາກນັ້ນ, ພວກເຂົາກໍໄດ້ເຊີນພຣະເຢຊູເຈົ້າເຂົ້າຮ່ວມອາຫານຄໍ່າຮ່ວມກັບພວກເຂົາ. ແລະພວກເຂົາສາມາດຈື່ພຣະອົງໄດ້ເມື່ອເວລາພຣະອົງບິເຂົ້າໜົມປັງ.

ສິ່ງທີ່ກ່າວມາທັງໝົດຂ້າງເທິງນີ້ທຳໃຫ້ພວກເຮົາເຂົ້າໃຈວ່າ ພຣະເຢຊູເຈົ້າສືບຕໍ່ປະຈັກມາຫາພວກລູກສິດຂອງພຣະອົງກໍຄືພວກເຮົາໃນທຸກວັນນີ້ຫລັງຈາກພຣະອົງໄດ້ກັບເປັນຄືນມາຈາກຄວາມຕາຍ. ແຕ່ສິ່ງທີ່ທຳໃຫ້ພວກລູກສິດເຫັນແລະຮູ້ຈັກພຣະເຢຊູເຈົ້າໄດ້ນັ້ນຄືວາຈາແລະການບິປັງຂອງພຣະອົງ. ປະສົບການແຫ່ງການພົບພໍ້ຂອງພວກລູກສິດກັບພຣະເຢຊູເຈົ້ານີ້ທຳໃຫ້ຊີວິດຂອງພວກເຂົາປ່ຽນແປງໃໝ່ ຈາກຄວາມຢ້ານກົວ, ໂສກເສົ້າແລະສິ້ນຫວັງມາສູ່ຄວາມກ້າຫານ, ຄວາມຫວັງແລະຄວາມຍິນດີ.

ສ່ວນພວກເຮົາໃນວັນນີ້, ພວກເຮົາໄດ້ພົບເຫັນພຣະເຢຊູເຈົ້າເມື່ອພວກເຮົາອ່ານວາຈາຂອງພຣະອົງບໍ? ພວກເຮົາໄດ້ຮູ້ຈັກພຣະອົງໃນການບິປັງນັ້ນຄືພິທີບູຊາມິຊຊາບໍ? ແລະທຸກຄັ້ງທີ່ພວກເຮົາພົບພໍ້ພຣະອົງດວງໃຈຂອງພວກເຮົາໄດ້ມີການປ່ຽນແປງໃໝ່ບໍ? ຊີວິດຂອງພວກເຮົາໄດ້ພົບກັບຄວາມກ້າຫານ, ຄວາມຫວັງແລະຄວາມຍິນດີບໍ? ແລະສຳຄັນກວ່ານັ້ນອີກ, ພວກເຮົາສາມາດເປັນພິຍານໃຫ້ກັບຄົນອື່ນເຖິງການກັບເປັນຄືນມາຂອງພຣະເຢຊູເຈົ້າໄດ້ບໍ? ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍເປີດສະຕິປັນຍາແລະດວງໃຈພວກເຮົາ ເພື່ອພວກເຮົາຈະໄດ້ຮູ້ຈັກແລະເຫັນພຣະເຢຊູເຈົ້າຜູ້ສະຖິດຢູ່ຄຽງຂ້າງພວກເຮົາສະເໝີບົນເສັ້ນທາງຊີວິດຂອງພວກເຮົາແຕ່ລະວັນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ